ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 03 ຫາ 07 ກໍລະກົດ 2023



## ເຕັກນິກການປູກເຫັດນາງລົມ ແລະ ນາງຟ້າ ໃນຖົງຢາງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ເຕັກນິກການປູກເຫັດ ນາງລົມ ແລະ ນາງຟ້າ ໃນຖົງຢາງ

ເຫັດນາງລົມ ແລະ ເຫັດນາງຟ້າ ມີຄຸນປະໂຫຍດທາງດ້ານອາຫານສູງ ໂດຍສະເພາະທາດໂປຼຕີນ, ຄາໂບໄຮເດດ ແລະ ວິຕາມິນບໍ່ໜ້ອຍນອກນີ້, ເຫັດຍັງໃຫ້ປະລິມານແຮ່ທາດຫຼາຍຊະນິດເຊັ່ນ: ທາດແຄວຊ້ຽມ, ຟົດສະຟໍຣັດ, ໂປຼເຕຊ້ຽມ ແລະ ມີພະລັງງານຂ້ອນຂ້າງສູງ, ການຮັບປະທານເຫັດສາມາດປ້ອງກັນພະຍາດເລືອດຈາງ, ຫຼຸດຜ່ອນຄວາມດັນສູງ.

1. ການປູກເຫັດນາງລົມ ແລະ ນາງຟ້າ ຄວນມີວິທີເລືອກສະຖານທີ່ແບບໃດ?

ເຫັດນາງລົມ ແລະ ເຫັດນາງຟ້າ ຈະເລີນເຕີບໂຕໄດ້ດີໃນໄລຍະເປັນດອກ ໃນບ່ອນອາກາດທີ່ມີຄວາມຊຸ່ມສູງ 80% ຂຶ້ນໄປ ຈຳເປັນຕ້ອງສ້າງໂຮງເຮືອນໄວ້, ເພື່ອເກັບຄວາມຊຸ່ມ ພາຍໃນໂຮງເຮືອນເຮັດເປັນຊັ້ນ ຫຼື ເປັນຮ້ານບໍ່ຕ້ອງກຳນົດຮູບແບບຕາຍຕົວ ພຽງແຕ່ວາງຖົງກ້ອນເຊື້ອໃຫ້ໄດ້ຫຼາຍຖົງ ແລະ ສາມາດເກັບດອກເຫັດໄດ້ຢ່າງສະດວກ ແລະ ຫົດນ້ຳໄດ້ສະດວກ, ລັກສະນະຂອງໂຮງເຮືອນອາດເປັນໂຮງເຮືອນຂະໜາດໃຫຍ່ ຫຼື ນ້ອຍກໍ່ໄດ້, ຫຼັງຄາມຸງດ້ວຍຫຍ້າແອ້ມດ້ວຍຝາໄມ້ເຮ້ຍ ຫຼື ຫຍ້າກໍ່ໄດ້ພື້ນຂອງໂຮງເຮືອນອາດປູດ້ວຍຊາຍ ຫຼື ເປັນພື້ນດິນທຳມະດາ ມີປະຕູເຂົ້າອອກໄດ້ສະດວກ, ໃນບໍລິເວນເຮືອນປູກເຫັດຄວນມີຮົ່ມໄມ້, ເພື່ອຊ່ວຍໃຫ້ມີຄວາມຊຸ່ມພາຍໃນໂຮງເຮືອນປູກເຫັດສະໝ່ຳສະເໝີ.

2. ອຸປະກອນທີ່ໃຊ້ໃນການເຮັດຖົງກ້ອນເຊື້ອເຫັດ

- ຖົງຢາງກັນຮ້ອນ ຂະໜາດ 6x12 ຊັງຕີແມັດ ຫຼື 7x12 ຊັງຕີແມັດ, ປອກຄໍປາກຖົງ, ສຳລີ ຫຼື ຢອງຝ້າຍ, ຢາງມັດ, ຫົວເຊື້ອເຫັດໃນເມັດພືດ, ຫ້ອງເຂ່ຍເຊື້ອ, ຝາອັດ ຫຼື ເຈ້ຍອັດປາກຖົງ, ເຫຼົ້າ 90, ໝໍ້ໜຶ້ງຂ້າເຊື້ອ (ຟຸ້ຍ), ເຮືອນພັກຖົງ ແລະ ເຮືອນສຳລັບເປີດດອກເຫັດ.

3. ສູດສ່ວນປະສົມທີ່ໃຊ້ໃນການເຮັດຖົງກ້ອນເຊື້ອເຫັດ ດັ່ງນີ້:

- ຂີ້ເລື່ອຍໄມ້ເນື້ອອ່ອນ 100 ກິໂລກຼາມ (ໃຫ້ຮ່ອນເອົາເສດໄມ້ອອກ)
- ຮຳອ່ອນ 7 ກິໂລກຼາມ
- ເຂົ້າປຸ້ງນ 2 ກິໂລກຼາມ
- ປູນຂາວ 1 ກິໂລກຼາມ
- ຢິບຊຳ 1 ກິໂລກຼາມ
- ດີເກືອ 0,3 ກິໂລກຼາມ
- ຟູນາຍ 0,5 ກິໂລກຼາມ
- ນ້ຳ 65-70%

4. ຂັ້ນຕອນການປະສົມ

4.1 ເທຂີ້ເລື່ອຍຈາກນັ້ນໃສ່ຮຳ, ປູນຂາວ, ຢິບຊຳ,





ຟູມາຍ, ດີເກືອ ປະສົມໃຫ້ເຂົ້າກັນ

4.2 ຈາກນັ້ນໃຊ້ນ້ຳທິດໃຫ້ທົ່ວ ແລະ ປະສົມໃຫ້ເຂົ້າກັນ ໃຫ້ຂີ້ເລື່ອຍມີຄວາມຊຸມ 65-70 % ວິທີກວດສອບແມ່ນໃຫ້ໃຊ້ມືກຳຂື້ນມາ ຖ້າກຳແລ້ວຂີ້ເລື່ອຍຈັບຕົວເປັນກ້ອນ ສະແດງວ່າຄວາມຊຸ່ມໄດ້ ແຕ່ຖ້າກຳແລ້ວແຫ້ງບໍ່ເປັນກ້ອນໃຫ້ໃສ່ນ້ຳເພີ່ມ ຫຼື ຖ້າມີນ້ຳໄຫຼອອກມາສະແດງວ່ານ້ຳຫຼາຍເກີນໄປ ໃຫ້ໃສ່ຂີ້ເລື່ອຍເພີ່ມ.

4.3 ຕັກຂີ້ເລື່ອຍທີ່ປະສົມອາຫານເສີມຕ່າງໆແລ້ວໃສ່ໃນຖົງທີ່ກຽມໄວ້ໃຫ້ເຕັມປາກຖົງ ຈາກນັ້ນອັດໃຫ້ແໜ້ນເປັນກ້ອນ ຖົງໜຶ່ງໃຫ້ໄດ້ປະມານ 0,8 ກິໂລກຼາມ.

4.4 ນຳຄໍປາກຖົງໃສ່ ແລ້ວໃຊ້ຢາງບ້ວງຮັດອັດດ້ວຍຝ້າຍ ຫຼື ສຳລີ ເອົາເຈ້ຍອັດທັບຮັດດ້ວຍຢາງບ້ວງອີກຄັ້ງໜຶ່ງ.

4.5 ໃຊ້ຟຸ້ຍເພື່ອນຶ້ງເຊິ່ງສາມາດບັນຈຸຖົງກ້ອນເຊື້ອເຫັດໄດ້ 100-110 ຖົງ, ສ່ວນທາງໃນໝໍ້ໃຫ້ເອົາໄມ້ເຮັດເປັນຕະແກງ, ເພື່ອຮອງຖົງ, ປະມານ 12-15 ຊັງຕີແມັດ, ນຳເອົາຖົງຂີ້ເລື່ອຍມາບັນຈຸໃສ່ໝໍ້ໜຶ້ງໂດຍລຽນຖົງທາງຕັ້ງໃຫ້ເຕັມຟຸ້ຍ ເອົາແຜ່ນຢາງປົກປາກໝໍ້ ແລ້ວເອົາເຊືອກມັດອ້ອມໃຫ້ແໜ້ນ, ເຈາະຮູຊ່ຳປາຍນິ້ວກ້ອຍໃສ່ແຜ່ນຢາງໃຈກາງໝໍ້ນຶ້ງເພື່ອໃຫ້ອາຍນ້ຳອອກ, ດັງໄຟໃສ່ໝໍ້ນຶ້ງສະໝ່ຳສະເໝີ ໃຫ້ອຸນຫະພູມ 95-100 ອົງສາ, ໃຊ້ເວລາປະມານ 2-3 ຊົ່ວໂມງ, ຖ້າໜຶ້ງໃນອຸນຫະພູມ 90-95 ອົງສາເຊ ໃຊ້ເວລາປະມານ 4-5 ຊົ່ວໂມງ ເມື່ອຄົບເວລາໃຫ້ນຳມາພັກໄວ້ໃຫ້ເຢັນ.

5. ວິທີຢອດເຊື້ອ ແລະ ບົ່ມເຊື້ອ

ຫຼັງຈາກກຽມກ້ອນເຊື້ອເຫັດແລ້ວ ໃຫ້ນຳຫົວເຊື້ອເຫັດທີ່ກຽມໄວ້ໂດຍເລືອກໃຊ້ຫົວເຊື້ອເຫັດທີ່ມີເສັ້ນໄຍຂະຫຍາຍຕົວເຕັມທີ່ໃນເມັດພັນພືດໃໝ່ ເພາະຫົວເຊື້ອເຫັດໃນໄລຍະນີ້ກຳລັງແຂງແຮງ ແລະ ຂະຫຍາຍຕົວໄດ້ໄວ, ສະຖານທີ່ເຂ່ຍເຊື້ອຄວນເຂ່ຍໃນຫ້ອງທີ່ສະອາດ ແລະ ສາມາດ ປ້ອງກັນລົມ, ດັ່ງນັ້ນຄວນເຂ່ຍເຊື້ອໃນຕອນເຊົ້າ ແລະ ຕອນແລງ, ການ



ເຂ່ຍເຊື້ອເຫັດຄວນໃຊ້ເຂັມເຂ່ຍເຊື້ອລົນໄຟຕະກຽງເຫຼົ້າ 90 ແລ້ວ ປ່ອຍໃຫ້ໃຫ້ເຢັນເສຍກ່ອນ, ເອົາເຂັມເຂ່ຍເມັດພັນພືດທີ່ມີເຊື້ອເຫັດອອກຈາກກັນ (ສັ່ນ ຫຼື ຕີແກ້ວຫົວເຊື້ອເຫັດເພື່ອໃຫ້ເມັດພັນພືດອອກຈາກກັນ) ສະດວກໃນການເຂ່ຍເຊື້ອເຫັດໃສ່ຖົງກ້ອນຂີ້ເລື່ອຍໃສ່ປະມານ 15-20 ເມັດ ຕໍ່ຖົງ, ຈາກນັ້ນ ໃຊ້ມືຈັບປາກຖົງສັ່ນໆ 2-3 ເທື່ອເພື່ອໃຫ້ຫົວເຊື້ອເຫັດກະຈາຍອອກ ແລ້ວອັດຈຸກສຳລີດ້ວຍເຈ້ຍ.

- ຖົງເຊື້ອເຫັດທີ່ເຂ່ຍເຊື້ອຮຽບຮ້ອຍແລ້ວຄວນບົ່ມໄວ້ໃນຫ້ອງສະອາດ ຫຼື ຫ້ອງທີ່ບໍ່ມີລົມພັດ, ບໍ່ໃຫ້ຖືກແສງແດດ, ເຮັດເປັນຮ້ານຊັ້ນບົ່ມຖົງກ້ອນເຊື້ອເຫັດ, ເສັ້ນໄຍເຫັດຂະຫຍາຍເຕັມຖົງປະມານ 3-4 ອາທິດ, ເພື່ອໃຫ້ເສັ້ນໄຍຮັດຕົວ ແລະ ມີການສະສົມອາຫານພ້ອມທີ່ຈະເກີດດອກ, ຈາກນັ້ນ ຈຶ່ງນຳຖົງກ້ອນເຊື້ອເຫັດເຂົ້າໄປໃນເຮືອນປູກເຫັດ.

6. ການເອົາຖົງກ້ອນເຫັດເຂົ້າໂຮງເຮືອນປູກເຫັດ

ເມື່ອເສັ້ນໄຍເຫັດສີຂາວຂະຫຍາຍຕົວເຕັມຖົງແລ້ວ, ຈຶ່ງນຳເອົາຖົງກ້ອນເຊື້ອເຫັດທີ່ບົ່ມໄວ້ນັ້ນເຂົ້າເຮືອນປູກເຫັດ, ຈັດວາງເປັນແຖວຍາວຕາມຮ້ານທີ່ຈັດຕຽມໄວ້, ຫຼັງຈາກນັ້ນນຳເອົາເຈ້ຍ ແລະ ສຳລີ ອອກຈາກປາກຖົງໃຫ້ໝົດ, ເຮືອນຂະໜາດ 4x6 ແມັດສາມາດບັນຈຸຖົງກ້ອນເຊື້ອ ໄດ້ປະມານ 4.000 ຖົງ.

7. ການຫົດນ້ຳ

- ການໃຫ້ນ້ຳເຫັດຄວນສັງເກດຄວາມຊຸ່ມໃນອາກາດ ຕາມປົກກະຕິແລ້ວການໃຫ້ນ້ຳມື້ໜຶ່ງໃຫ້ປະມານ 2-3 ຄັ້ງ, ຄວນສີດພົ່ນໃຫ້ເປັນຝອຍໃສ່ເທິງຖົງເຫັດ, ບໍ່ໃຫ້ເຂົ້າປາກຖົງເຫັດຫຼາຍຈົນເກີນໄປເພາະຈະເຮັດໃຫ້ກ້ອນເຊື້ອເຫັດເນົ່າໄດ້.

- ການເກັບດອກເຫັດໃຫ້ບິດເອົາໝົດຈຸກຂອງເຫງົ້າເຫັດ ຄ່ອຍບິດບໍ່ໃຫ້ຖົງເຫັດກະທົບກະເທືອນ, ອາຍຸຂອງດອກເຫັດປະມານ 1-2 ວັນ ກໍ່ສາມາດເກັບໄດ້.

ຂໍ້ມູນຈາກ: ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ


ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;